

# ແຜນງານ ທັກສະ ເພື່ອການທ່ອງທ່ຽວ, ກະສິກຳ ແລະ ປ່າໄມ້

**ຂະແໜງການ** | ການສຶກສາ, ການຝຶກວິຊາຊີບ ແລະ ການຈັດຫາງານ

**ອົງການ** | LuxDev

**ໄລຍະໂຄງການ** | 60 ເດືອນ (ເດືອນມັງກອນ 2023 - ທັນວາ 2027)

## ກຸ່ມເປົ້າໝາຍ

ນັກສຶກສາ, ຜູ້ຊອກວຽກເຮັດງານທຳ ແລະ ຜູ້ປະກອບການຈາກວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ໂດຍສຸມໃສ່ໄວໜຸ່ມດ້ອຍໂອກາດ.

## ສະຖາບັນທີ່ກ່ຽວຂ້ອງ

- ກະຊວງ ສຶກສາທິການ ແລະ ກິລາ (MoES);
- ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ (MoLSW);
- ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (MICT);
- ກະຊວງ ກະສິກຳ ແລະ ປ່າໄມ້ (MAF).

## ນະໂຍບາຍ ແລະ ຍຸດທະສາດຂອງຂະແໜງການ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂັ້ນແຂວງ ແລະ ຂັ້ນເມືອງ ແລະ ແຜນການພັດທະນາຂະແໜງການ (ຂະແໜງທ່ອງທ່ຽວ, ກະສິກຳ ແລະ ປ່າໄມ້), ລວມທັງ ຍຸດທະສາດພັດທະນາຂະແໜງອາຊີວະສຶກສາ ແລະ ສີມືແຮງງານ.

**ງົບປະມານ** | 25,180,000 ເອີໂຣ (ລຸກຊຳບວກ: 10,000,000 ເອີໂຣ – ສະວິດເຊີແລນ: 8,180,000 ເອີໂຣ – ສະຫະພາບເອີຣົບ: 7,000,000 ເອີໂຣ)



ເຖິງແມ່ນວ່າ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ແລະ ບັນດາຄູ່ຮ່ວມພັດທະນາ ໄດ້ລົງທຶນຢ່າງມະຫາສານໃນຂະແໜງການສຶກສາ ແລະ ການຝຶກອົບຮົມ ກໍ່ຕາມ, ທັກສະຂອງແຮງງານລາວຍັງຢູ່ລະດັບຕ່ຳເມື່ອບທຽບກັບ ບັນດາປະເທດເພື່ອນບ້ານເຊິ່ງມັນເປັນຂໍ້ຈຳກັດໃນການແຂ່ງຂັນ ແລະ ການເຕີບໂຕດ້ານເສດຖະກິດຂອງ ສປປ ລາວ. ສະນັ້ນ, ການພັດທະນາຊັບພະຍາກອນມະນຸດ ຈຶ່ງເປັນວຽກບູລິມະສິດໜຶ່ງໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP) ຄັ້ງທີ 9 (2021-2025), ໂດຍການຍົກລະດັບຄຸນນະພາບການສຶກສາ ແລະ ຄວາມສາມາດດ້ານກຳລັງແຮງງານ. ເພື່ອຕອບສະໜອງກັບວຽກງານດັ່ງກ່າວນີ້, ຈຶ່ງຕ້ອງໄດ້ມີການປັບປຸງລະບົບການຮຽນ-ການສອນ VSD ໃຫ້ມີຄຸນະພາບ, ສອດຄ່ອງກັບຕະຫຼາດແຮງງານ ແລະ ສາມາດເຂົ້າເຖິງໄດ້. ນອກນັ້ນ, ເປົ້າໝາຍລວມຂອງແຜນງານດັ່ງກ່າວ ຍັງຕິດພັນ ກັບບັນດາບູລິມະສິດທີ່ນອນໃນ ແຜນຍຸດທະສາດຂອງທີມເອີຣົບປະຈຳປີ 2021-2025, ເຊິ່ງໄດ້ເຮັດ ໃຫ້ແຜນງານດັ່ງກ່າວເປັນແຜນງານຫຼັກຂອງທີມເອີຣົບທີ່ໄດ້ຮັບການສະໜອງທຶນຮ່ວມກັນໂດຍ ລັດຖະບານແຫ່ງ ສປປ ລາວ, ລຸກຊຳບວກ, ສະວິດ ແລະ ສະຫະພາບເອີຣົບ.

ແຜນງານ 5-ປີ ທັກສະເພື່ອການທ່ອງທ່ຽວ, ກະສິກຳ ແລະ ປ່າໄມ້ (STAF) ມີເປົ້າໝາຍແນໃສ່ສົ່ງເສີມ ແລະ ອຳນວຍຄວາມສະດວກເພື່ອໃຫ້ເກີດການປ່ຽນແປງທີ່ມີຄວາມໝາຍໃນວຽກງານ VSD ເນື່ອງຈາກວ່າການສ້າງຄວາມສາມາດໃນການປະກອບອາຊີບ ເພື່ອຍາດແຍ່ງເອົາໂອກາດທາງຜົນປະໂຫຍດຈາກວຽກເຮັດງານທຳ/ການສ້າງລາຍຮັບ ເປັນສິ່ງທີ່ສຳຄັນເພື່ອຮັບປະກັນວ່າຈະບໍ່ປະຖິ້ມໃຜໄວ້ເບື້ອງຫຼັງ.

ແຜນງານ ສຸມໃສ່ 2 ຂະແໜງການຫຼັກຂອງເສດຖະກິດ ທີ່ມີທ່າແຮງໃນການເຕີບໂຕ ແລະ ມີການນຳໃຊ້ແຮງງານທີ່ສູງ ແລະ ມີໂອກາດໄດ້ຮັບການສົ່ງເສີມຄວາມຍືນຍົງ, ການພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳ:

- ການທ່ອງທ່ຽວ ແລະ ການບໍລິການໂຮງແຮມ;
- ກະສິກຳ ແລະ ປ່າໄມ້.

ແຜນງານ STAF ສ້າງຄວາມເຂັ້ມແຂງທາງດ້ານຄວາມສາມາດໃຫ້ແກ່ພາກສ່ວນກ່ຽວຂ້ອງໃນວຽກງານ VSD, ລວມມີ ສະຖານອາຊີວະສຶກສາພາກລັດ ແລະ ເອກະຊົນ; ບັນດາຫົວໜ່ວຍແຮງງານ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງເຊັ່ນ: MoES, MoLSW, MICT ແລະ MAF, ລວມທັງ ບັນດາອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງມະຫາຊົນທີ່ກ່ຽວຂ້ອງ.

ແຜນງານມີຄາດໝາຍ ໃຫ້ໄດ້ 20,000 ຄົນ ໄດ້ຮັບການເສີມສ້າງທັກສະ ຜ່ານ ບໍລິການ VSD ທີ່ໄດ້ຮັບການປັບປຸງ ແລະ ການສະໜັບສະໜູນການເຂົ້າສູ່ຕະຫຼາດແຮງງານ/ການສ້າງລາຍຮັບ. ເພດຍິງ ແລະ ເພດຊາຍໄວໜຸ່ມຈຳນວນປະມານ 200,000 ຄົນ ຈະໄດ້ຮັບຜົນປະໂຫຍດໂດຍທາງອ້ອມຈາກການຈ້າງງານທີ່ໄດ້ຮັບ ການປັບປຸງເຊິ່ງເປັນ ຜົນມາຈາກການທີ່ມີ VSD ທີ່ດີຂຶ້ນ, ລວມທັງ ການໃຫ້ບໍລິການທີ່ກ່ຽວຂ້ອງ, ໂດຍສະເພາະສຸມໃສ່ກຸ່ມຄົນດ້ອຍໂອກາດ.

**ການເພີ່ມການຈ້າງງານໃຫ້ແກ່ປະຊາຊົນລາວ, ບໍ່ປະຖິ້ມໃຜໄວ້ເບື້ອງຫຼັງ.**

↑ **ການທ່ອງທ່ຽວ ແລະ.** ↑ **ກະສິກຳ ແລະ ປ່າໄມ້.**

↑ **ກິດຈະກຳ ການພັດທະນາທັກສະຊີຊາຊີບ (VSD).** ↑

| | | | | |
|---|---|---|---|---|
| ການຮຽນ-ການສອນ VSD ມີຄຸນນະພາບ ແລະ ສອດຄອງກັບ ຕະຫຼາດແຮງງານ. | ຫົວໜ່ວຍແຮງງານ, ຜູ້ຊອກວຽກເຮັດງານທຳ ແລະ ຜູ້ປະກອບການ ຕ້ອງການ VSD ທີ່ມີຄຸນະພາບເພີ່ມຂຶ້ນ. | ການນຳໃຊ້ງົບປະມານໃນວຽກງານ VSD ມີປະສິດທະພາບ, ກຸ່ມຜູ້ດ້ອຍໂອກາດສາມາດຈ່າຍຄ່າບໍລິການໄດ້. | ປະຊາຊົນລາວລວມທັງຊຸມຊົນຜູ້ ດ້ອຍໂອກາດ ສາມາດເຂົ້າເຖິງ ການບໍລິການ VSD. | ປະຊາຊົນລາວ ເຂົ້າໃຈກ່ຽວກັບ ໂອກາດໃນການມີວຽກເຮັດງານທຳທີ່ໝັ້ນຄົງ ແລະ ໄດ້ຮັບຄ່າຈ້າງແຮງງານທີ່ເ. |

## ວິໄສທັດແຫ່ງການປ່ຽນແປງ

ຖ້າຫາກການຮຽນ-ການສອນ VSD ມີຄຸນນະພາບ ແລະ ສອດຄອງກັບຕະຫຼາດແຮງງານ; ຖ້າຫາກ ຫົວໜ່ວຍແຮງງານ, ຜູ້ຊອກວຽກເຮັດງານທຳ ແລະ ຜູ້ປະກອບການ ຕ້ອງການ VSD ທີ່ມີຄຸນະພາບເພີ່ມຂຶ້ນ, ຖ້າຫາກ ການນຳໃຊ້ງົບປະມານໃນວຽກງານ VSD ມີປະສິດທະພາບເພີ່ມຂຶ້ນ, ຖ້າຫາກ ການເຂົ້າເຖິງ ການບໍລິການ VSD ໄດ້ຮັບການປັບປຸງ ແລະ ຖ້າຫາກມີການຈ້າງງານທີ່ຄວາມໝັ້ນຄົງ ແລະ ມີຄ່າຈ້າງແຮງງານທີ່ເໝາະສົມ ແລະ/ຫຼື ມີໂອກາດໃນການສ້າງລາຍຮັບ. ຄວາມສາມາດໃນການຈ້າງງານຂອງຄົນລາວກໍ່ຈະເພີ່ມຂຶ້ນ ແລະ ບໍ່ປະຖິ້ມໃຜໄວ້ເບື້ອງຫຼັງ.

ແຜນງານ STAF ສຸມໃສ່ 5 ກິດຈະກຳຫຼັກ ເພື່ອຮັບປະກັນການປັບປຸງ VSD ໃຫ້ສອດຄ່ອງກັບຄວາມຕ້ອງການຂອງອຸດສາຫະກຳ:

- VSD ໄດ້ຮັບການປັບປຸງໃຫ້ມີຄຸນນະພາບ ແລະ ສອດຄອງກັບຕະຫຼາດແຮງງານ, ໂດຍການມີສ່ວນຮ່ວມຢ່າງຕັ້ງໜ້າຂອງໂຕແທນອຸດສາຫະກຳການທ່ອງທ່ຽວ/ໂຮງແຮມ ແລະ ກະສິກ/ປ່າໄມ້ ແລະ ພາກສ່ວນກ່ຽວຂ້ອງ ໃນການກຳນົດໂອກາດຂອງການເຕີບໂຕທາງເສດຖະກິດ/ຕ່ອງໂສ້ມູນຄ່າ ຂອງຂະແໜງການດັ່ງກ່າວ, ພ້ອມທັງມີສ່ວນຮ່ວມໃນການວິເຄາະຕະຫຼາດແຮງງານ/ທັກສະແຮງງານທີ່ຕ້ອງການ ແລະ ພັດທະນາຫຼັກສູດ VSD. ລວມທັງການຍົກລະດັບຄວາມສາມາດໃຫ້ແກ່ຄູອາຈານໃນການນຳໃຊ້ເຄື່ອງມື ດີຈິຕອລ໌ ເຂົ້າໃນການສິດສອນ ເພື່ອເສີມສ້າງຄວາມເຂັ້ມແຂງ ແລະ ຮັບປະກັນຄຸນນະພາບຂອງວຽກງານ VSD;
- ປັບປຸງ VSD ໃຫ້ເປັນທີ່ຕ້ອງການຂອງບັນດາຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ. ສະຖານອາຊີວະສຶກສາ ແລະ ຜູ້ມີຊື່ສຽງໃນຊຸມຊົນຕ້ອງໄດ້ຮ່ວມມືກັນຢ່າງກົມກຽວ ແລະ ປະຊາສຳພັນຢ່າງມີປະສິດທິພາບ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈຄວາມສຳຄັນຂອງ VSD ຄຽງຄູ່ກັບການແນະນຳວິຊາຮຽນທີ່ຕິດພັນກັບໂອກາດຂອງວຽກເຮັດງານທຳ/ການສ້າງລາຍຮັບຂອງສາຍອາຊີບ;
- ສະໜັບສະໜູນທຶນການສຶກສາທີ່ມີທາງເລືອກໃຫ້ນັກຮຽນຫຼາຍຂຶ້ນ, ສ້າງແຮງຈູງໃຈໃຫ້ບັນດາສະຖານອາຊີວະສຶກສາໂດຍໃຫ້ທຶນສະໜັບສະໜູນ ທີ່ມີເງື່ອນໄຂອີງໃສ່ຜົນຂອງການປະຕິບັດງານ. ສະໜັບສະໜູນທາງດ້ານການເງິນໃຫ້ສະຖານອາຊີວະສຶກສາພາກລັດ ແລະ ເອກະຊົນ ເພື່ອຮັບມືກັບສະພາບແວດລ້ອມທີ່ມີການແຂ່ງຂັນ ແລະ ຈັດການຮຽນການສອນທີ່ມີຄຸນນະພາບ ແລະ ແທດເໝາະກັບຄວາມຕ້ອງການຂອງນັກຮຽນ ແລະ ຫົວໜ່ວຍແຮງງານ. ສ້າງກິດຈະກຳການຮ່ວມມືລະຫວ່າງສະຖານອາຊີວະສຶກສາພາກລັດ ແລະ ພາກທຸລະກິດ ເພື່ອໝູນໃຊ້ທ່າແຮງດ້ານຄວາມສາມາດ ແລະ ຊັບພະຍາກອນຂອງພາກເອກະຊົນໃນວຽກງານ VSD ໂດຍ ພັດທະນາແບບຈຳລອງເພື່ອການຝຶກປະຕິບັດທາງການຄ້າຕົວຈິງ;
- ການເພີ່ມການເຂົ້າເຖິງ VSD ລວມທັງ ການສ້າງ ແລະ ການສະໜອງການໃຫ້ບໍລິການ VSD ໃນລະບົບ ແລະ ນອກລະບົບ (ຮູບແບບດິຈິຕອນ ຖ້າຫາກມີ), ລວມທັງ ການສ້າງຄວາມເຂັ້ມແຂງຂອງພາກສ່ວນຜູ້ສະໜອງການສຶກສາພາກລັດ ແລະ ພາກເອກະຊົນ, ລວມທັງ ການຂະຫຍາຍການບໍລິການພາກ A/F ອອກໄປ, ໂດຍສະເພາະ ໃນຂັ້ນເມືອງ ແລະ ຂັ້ນແຂວງ;
- ເສີມຂະຫຍາຍການເຂົ້າສູ່ຕະຫຼາດແຮງງານ ໂດຍການແນະແນວສາຍອາຊີບ, ສະໜອງຂໍ້ມູນຂ່າວສານໂອກາດຂອງວຽກເຮັດງານທຳ ແລະການຝຶກອົບຮົມ ໃຫ້ມີຄວາມຫຼາກຫຼາຍ ແລະ ດີຂຶ້ນ ແນໃສ່ປັບປຸງຖານຂໍ້ມູນທາງອອນໄລນ໌ ໃຫ້ມີລັກສະນະກວມລວມ ແລະ ທຸກຄົນສາມາດເຂົ້າເຖິງໄດ້ງ່າຍ ໂດຍສະເພາະແມ່ນກຸ່ມຜູ້ຊອກວຽກເຮັດງານທຳທີ່ດ້ອຍໂອກາດ.

ແຜນງານໄດ້ສັງລວມ ແລະ ອີງໃສ່ວຽກງານທີ່ຕິດພັນ ແລະ ກ່ຽວຂ້ອງໃນກອບ VSD ໃນ ສປປ ລາວໃຫ້ໄດ້ຫຼາຍທີ່ສຸດ ເພື່ອຮັບປະກັນຄວາມສອດຄ່ອງກັບຍຸດທະສາດແຫ່ງຊາດ, ນະໂຍບາຍ ແລະ ແຜນ, ອຳນວຍຄວາມສະດວກໃນການປ່ຽນແປງຢ່າງເປັນລະບົບ ແລະ ເຕີບໂຕ, ຫຼີກລ່ຽງໂຄງສ້າງ ແລະ ກິດຈະກຳທີ່ທັບຊ້ອນ, ລວມທັງ ການເພີ່ມຄວາມຍືນຍົງຂອງກິດຈະກຳ.


### ຕິດຕໍ່ LuxDev

ຫ້ອງການປະຈຳອາຊີ, ອົງການ LuxDev | ໂຄງການ ທັກສະສຳລັບການທ່ອງທ່ຽວ ແລະ ກະສິກຳ
ຖະໜົນ ດົງໄປນາ, ບ້ານ ສະພານທອງເໜືອ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ອີເມວ໌: admin.opevte@luxdev.lu


luxdev.lu

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

Co-funded by the European Union

LUXEMBOURG AID & DEVELOPMENT

LUXDEV Luxembourg Development Agency